ກະຊວງແຜນການ ແລະ ການລົງທຶນ ໃນນາມຮອງປະທານ ທັງເປັນຜູ້ປະຈຳການຄະນະຊີ້ນຳລະດັບຊາດເພື່ອຂະບວນການໂຕະມົນ ໄດ້ຈັດກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດວຽກງານຂະບວນການໂຕະມົນ ປະຈຳປີ 2023 ແລະວາງທິດທາງແຜນການ ປະຈຳປີ 2024 ຂຶ້ນ, ທີ່ ໂຮງແຮມ ຄຣາວພາຊ່າ, ນະຄອນຫຼວງວຽງຈັນ ໂດຍມີຈຸດປະສົງເພື່ອປຶກສາຫາລື ກ່ຽວກັບການຈັດຕັ້ງຜັນຂະ ຫຍາຍຜົນກອງປະຊຸມໂຕະມົນ ປະຈຳປີ 2023 ຕາມທິດຊີ້ນຳຂອງ ທ່ານນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ແລະກະກຽມການຈັດກອງປະຊຸມໂຕະມົນປະຈຳປີ 2024. ໂດຍມີຜູ້ເຂົ້າຮ່ວມຈາກກະຊວງຂະແໜງການ, ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ, ອົງການຈັດຕັ້ງທາງສັງຄົມ ແລະພາກເອກະຊົນ ທັງໝົດ 80 ກ່ວາທ່ານ. ເຊິ່ງສາມາດສະຫຼຸບສັງລວມຜົນຂອງກອງປະຊຸມ ແລະສະເໜີທິດຊີ້ນຳຜັນຂະຫຍາຍດັ່ງນີ້ :

## I. <u>ເນື້ອໃນຂອງກອງປະຊຸມ</u>

ກອງປະຊຸມໄດ້ດຳເນີນເປັນເວລາເຄິ່ງມື້, ໄດ້ຮັບຟັງການນຳສະເໜີ ແລະປຶກສາຫາລື: 1) ຄວາມຄືບໜ້າໃນການຜັນຂະຫຍາຍຜົນຂອງກອງປະຊຸມໂຕະມົນ ປະຈຳປີ 2023; 2) ຮ່າງແນວຄວາມຄິດການຈັດກອງປະຊຸມໂຕະມົນ ປະຈຳປີ 2024; ແລະ3) ຈັດກຸ່ມສົນທະນາ 2 ກຸ່ມ ປຶກສາຫາລື ເພື່ອເປັນເອກະພາບຮ່ວມກັນ ລະຫວ່າງ ລັດຖະບານ ແລະຄູ່ຮ່ວມພັດທະນາ ກ່ຽວກັບທິດທາງແຜນການໃນການຈັດກອງປະຊຸມໂຕະມົນ ປະຈຳປີ 2024 ໃຫ້ມີປະສິດທິຜົນ ແລະໄດ້ຮັບໝາກຜົນສູງສຸດ.

## II. <u>ຜົນຂອງກອງປະຊຸມ:</u>

### 1. <u>ຄວາມຄືບໜ້າໃນການຜັນຂະຫຍາຍຜົນຂອງກອງປະຊຸມໂຕະມົນ ປະຈຳປີ 2023</u>

- ບັນດາກອງເລຂາໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບ ຄູ່ຮ່ວມພັດທະນາ (SWGs) ໄດ້ຈັດກອງປະຊຸມ ໜ່ວຍງານຂະແໜງການຕົນ ແລະນຳເອົາຜົນກອງປະຊຸມໂຕະມົນ ປະຈຳປີ 2023 ໄປຈັດຕັ້ງຜັນຂະຫຍາຍເຂົ້າໃນແຜນວຽກປະຈຳປີ ເພື່ອໃຫ້ສາມາດປະຕິບັດໄດ້ຢ່າງມີປະສິດທິຜົນ ແລະໄປຕາມແຜນທີ່ວາງໄວ້;
- ກອງເລຂາໜ່ວຍງານຂະແໜງການ ໂດຍສະເພາະພາກສ່ວນທີ່ກ່ຽວຂ້ອງ ແລະຄູ່ຮ່ວມພັດທະນາ ໄດ້ຈັດຕັ້ງຜັນຂະຫຍາຍ ໂດຍການປະຊຸມປຶກສາຫາລືຮ່ວມກັນ ໃນລາຍລະອຽດເພື່ອຈັດຕັ້ງປະຕິບັດຜົນຂອງ 2 ຫົວຂໍ້ສົນທະນາ ຢູ່ໃນກອງປະຊຸມໂຕະມົນ ປະຈຳປີ 2023 ກຸ່ມສົນທະນາ: 1) ສະພາບເສດຖະກິດ ແລະທິດທາງການເຕີບໂຕເພື່ອຄວາມຍືນຍົງ ແລະສີຂຽວ; 2) ຊັບພະຍາກອນມະນຸດ ເພື່ອການພັດທະນາແບບຍືນຍົງ ໃຫ້ມີຄວາມຄືບໜ້າ ແລະເປັນຮູບປະທຳ;
- ກະຊວງຂະແໜງການ ແລະຄູ່ຮ່ວມພັດທະນາ ໄດ້ຈັດຕັ້ງປະຕິບັດຕາມ ບົດແນະນຳກົນໄກຂະບວນການໂຕະມົນ ໂດຍການຈັດກອງປະຊຸມປະຈຳໄຕມາດ ເພື່ອຕິດຕາມຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານ ໂດຍສະເພາະທີ່ຕິດພັນກັບຂະບວນການໂຕະມົນ.

### 2. <u>ແນວຄວາມຄິດໃນການຈັດກອງປະຊຸມໂຕະມົນ ປະຈຳປີ 2024</u>

ກອງປະຊຸມໄດ້ຈັດແບ່ງເປັນ 2 ກຸ່ມ ເພື່ອປຶກສາຫາລື ກ່ຽວກັບແນວທາງໃນການຈັດກອງປະຊຸມໂຕະມົນ 2024 ເຊິ່ງຜົນການສົນທະນາທັງ 2 ກຸ່ມ ສາມາດສະຫຼູບສັງລວມໂດຍຫຍໍ້ໄດ້ດັ່ງລຸ່ມນີ້:

**1. ຈຸດປະສົງຂອງກອງປະຊຸມໂຕະມົນປະຈຳປີ 2024:**

(1) ເພື່ອກະກຽມໃຫ້ແກ່ການສ້າງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5ປີ ຄັ້ງທີ X;

(2) ປຶກສາຫາລື ທາງດ້ານນະໂຍບາຍ, ຍຸດທະສາດ ເພື່ອກຳນົດມາດຕະການ ແລະຫຼຸດຜ່ອນຄວາມແຕກໂຕນ ໃນການພັດທະນາເສດຖະກິດ-ສັງຄົມ;

(3) ຈັດຕັ້ງປະຕິບັດນະໂຍບາຍ ແລະສ້າງກົນໄກການຕິດຕາມ ການອອກຈາກສະຖານະພາບການເປັນປະເທດດ້ອຍພັດທະນາ;

**2. ຫົວຂໍ້ຂອງກອງປະຊຸມ**

(1) *"ຍົກສູງການເປັນຄູ່ຮ່ວມ ເພື່ອການພັດທະນາ ທີ່ມີປະສິດທິຜົນ ເພື່ອເລັ່ງລັດຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX ແລະການກະກຽມສ້າງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ ແລະການຫຼຸດພົ້ນອອກຈາກ ສະຖານະພາບການເປັນປະເທດດ້ອຍພັດທະນາ";*

(2) *"ສົ່ງເສີມນະໂຍບາຍ ໃນການຕິດຕາມການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະການຫຼຸດພົ້ນອອກຈາກ ສະຖານະພາບການເປັນປະເທດດ້ອຍພັດທະນາ".*

**3. ຂົງເຂດຈຸດສຸມການປຶກສາຫາລື**

(1) ການສໍາຫຼວດດັດສະນີໝາຍທາງສັງຄົມ;
(2) ເສດຖະກິດ-ການພັດທະນາມະນຸດ ແລະສິ່ງແວດລ້ອມ;
(3) ການຫັນເປັນທັນສະໄໝ (ບັນຫາພົ້ນເດັ່ນ-ປິ່ນອ້ອມ);
(4) ການຈັດຕັ້ງປະຕິບັດຍຸດທະສາດການເງິນຂອງ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ (ສຸມໃສ່ການຫັນປ່ຽນຊັບສິນມະນຸດ ແລະພົນລະເມືອງ);
(5) ຍຸດທະສາດການຫຼຸດພົ້ນອອກຈາກສະຖານະພາບການເປັນປະເທດດ້ອຍພັດທະນາ;
(6) ຜົນໄດ້ຮັບຂອງການລາຍງານ ແຫ່ງຊາດ ແບບສະໝັກໃຈ;
(7) ເລັ່ງລັດຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5ປີ ຄັ້ງທີ IX;
(8) ການສ້າງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5ປີ ຄັ້ງທີ X;
(9) ການສ້າງກຸ່ມສົນທະນາ ເພື່ອສືບຕໍ່-ຕິດຕາມ ການຈັດຕັ້ງປະຕິບັດຄໍາແນະນໍາ ແລະຜົນກອງປະຊຸມໂຕະມົນ ປະຈໍາປີ 2023;
(10) ຜົນຂອງກອງປະຊຸມສຸດຍອດອາຊຽນ ໂດຍສະເພາະຂົງເຂດທີ່ເປັນບູລິມະສິດ;
(11) ຜົນຂອງກອງປະຊຸມພາກເອກະຊົນ ຮ່ວມກັບ ສະຫະພາບເອີຣົບ ແລະອົດສະຕຼາລີ.

**4. ຮູບແບບ ແລະວັນເວລາ**

- ກອງປະຊຸມ 1 ມື້ ແລະມີການແບ່ງກຸ່ມສົນທະນາ; ມີກອງປະຊຸມປິ່ນອ້ອມກ່ອນ ກອງປະຊຸມໂຕະມົນ 1 ເຖິງ 2 ອາທິດ ເພື່ອຍົກສູງປະສິດທິພາບ ແລະໃຫ້ມີເວລາໃນການສົນທະນາຫຼາຍຂຶ້ນ;
- ສ່ວນວັນ, ເວລາແມ່ນ ສະເໜີໃຫ້ຈັດໃນ ທ້າຍເດືອນ ຕຸລາ ຫຼື ຕົ້ນເດືອນ ພະຈິກ ເພື່ອຮັບປະກັນບໍ່ໃຫ້ມີການທັບຊ້ອນກັບກອງປະຊຸມ ສຸດຍອດອາຊຽນ (6-11 ຕຸລາ) ແລະໃຫ້ສາມາດຈັດກ່ອນກອງປະຊຸມສະພາ (ທ້າຍເດືອນ ພະຈິກ) ເຊິ່ງຈະໄດ້ນໍາເອົາຜົນກອງປະຊຸມໂຕະມົນ ໄປລາຍງານໃນກອງປະຊຸມສະພາ.

**5. ສະຖານທີ**

- ຈັດຢູ່ແຂວງຫຼວງພະບາງ ຫຼື ນະຄອນຫຼວງວຽງຈັນ

**6. ການຢ້ຽມຢາມໂຄງການພາກສະໜາມ**

- ຈັດຢູ່ໃນໄລຍະກອງປະຊຸມ ໜ່ວຍງານຂະແໜງການ (SWG) ຫລື ຕະຫລອດປີ ຕາມວັນ, ເວລາ ທີ່ໜ່ວຍງານຂະແໜງການ ສະດວກ;
- ສະເໜີໃຫ້ມີການກໍານົດຫົວຂໍ້, ຄັດເລືອກໂຄງການທີ່ສໍາຄັນ ແລະພົ້ນເດັ່ນ ລວມທັງ ສົມທຽບການຈັດຕັ້ງປະຕິບັດໂຄງການຢູ່ແຂວງ ແລະສູນກາງ ເພື່ອຖອດຖອນບົດຮຽນ.

**7. ການຈັດງານວາງສະແດງ**

- ປະສານສົມທົບກັບ ໜ່ວຍງານຂະແໜງການ ເພື່ອເປັນເຈົ້າການໃນວຽກງານດັ່ງກ່າວ.

**8. ການຮ່ວມມືເພື່ອການພັດທະນາ ແລະ ວຽກງານອື່ນໆທີ່ກ່ຽວຂ້ອງ**

(1) ສະເໜີໃຫ້ມີການຈັດກອງປະຊຸມປຶກສາຫາລືກ່ອນ ກອງປະຊຸມໂຕະມົນ ເພື່ອຮັບປະກັນທາງດ້ານເນື້ອໃນ ແລະປະສິດທິຜົນຂອງກອງປະຊຸມ;

(2) ຄວນດໍາເນີນການສ້າງຕັ້ງຂະແໜງການພະລັງງານ ເພື່ອປະກອບເປັນໜ່ວຍງານຂະແໜງການຍ່ອຍ (Sub Sector of the SWG);

(3) ເຫັນຄວນມີການເຜີຍແຜ່ພາລະບົດບາດຂອງ ກະຊວງການເງິນ;

(4) ສະເໜີໃຫ້ໜ່ວຍງານຂະແໜງການ ມີການໝູນວຽນປະທານຮ່ວມຂອງ ໜ່ວຍງານຂະແໜງການເພື່ອປຶກສາຫາລືກັບ ຄູ່ຮ່ວມພັດທະນາ ເພື່ອການມີສ່ວນຮ່ວມຂອງຫຼາຍພາກສ່ວນ ແລະເປີດກ້ວາງການສົນທະນາທີ່ຫຼາກຫລາຍ;

(5) ຈັດກອງປະຊຸມ ໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບ ຄູ່ຮ່ວມພັດທະນາ ຢ່າງເປັນປົກກະຕິ ເພື່ອຕິດຕາມການຈັດຕັ້ງປະຕິບັດວຽກງານ;

(6) ປັບປຸງ ແລະປ້ອນຂໍ້ມູນຂ່າວສານໃໝ່ໆ ລົງໃນ ເວັບໄຊສ໌ ຂະບວນການໂຕະມົນ ແລະນໍາໃຊ້ລະບົບຖານຂໍ້ມູນ ການຊ່ວຍເຫຼືອທາງການ ເພື່ອການພັດທະນາ ຢ່າງເປັນປົກກະຕິ ເພື່ອສະໜອງຂໍ້ມູນໃຫ້ແກ່ທຸກພາກສ່ວນໄດ້ນໍາໃຊ້ ຢ່າງເປັນປົກກະຕິ;

(7) ສະເໜີໃຫ້ເອົາຂໍ້ມູນການສໍາຫຼວດດັດສະນີໝາຍທາງສັງຄົມ (LSIS III) ເພື່ອນໍາສະເໜີກ່ອນຈະຈັດກຸ່ມສົນທະນາ ໃນກອງປະຊຸມໂຕະມົນ ເຊັ່ນ:

- ຕົວຊີ້ບອກທາງສັງຄົມທີ່ຕິດພັນກັບ ການຫຼຸດພົ້ນອອກຈາກສະຖານະພາບການເປັນປະເທດດ້ອຍພັດທະນາ;
- ການທົບທວນກາງສະໄໝຂອງ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ;
- ບົດລາຍງານ ແຫ່ງຊາດ ແບບສະໝັກໃຈ 3.

(8) ສະເໜີໃຫ້ມີເວລາໃນການສົນທະນາແລກປ່ຽນໃຫ້ຫຼາຍຂຶ້ນ ໃນກອງປະຊຸມໂຕະມົນ.

## III. ທິດທາງໃນຕໍ່ໜ້າ:

– ກະຊວງແຜນການ ແລະ ການລົງທຶນ ໃນນາມຮອງປະທານ ທັງເປັນຜູ້ປະຈໍາການຄະນະຊີ້ນໍາລະດັບຊາດເພື່ອຂະບວນການໂຕະມົນ ຈະເຮັດວຽກຮ່ວມກັບພາກສ່ວນກ່ຽວຂ້ອງ ໃນການຜັນຂະຫຍາຍ ແລະເຜີຍແຜ່ຜົນຂອງກອງປະຊຸມໂຕະມົນປະຈໍາປີ 2023 ເປັນອັນລະອຽດ ເພື່ອເປັນບ່ອນອີງໃຫ້ບັນດາກະຊວງ, ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະຄູ່ຮ່ວມພັດທະນາ ໃນການຈັດຕັ້ງປະຕິບັດ;

– ສະເໜີໃຫ້ບັນດາກະຊວງ, ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະຄູ່ຮ່ວມພັດທະນາ ທີ່ເຂົ້າຮ່ວມກອງປະຊຸມ ນໍາເອົາເນື້ອໃນຈິດໃຈ ກໍ່ຄືຜົນຂອງກອງປະຊຸມໂຕະມົນຄັ້ງນີ້ ສົມທົບກັບແຈ້ງການຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ໄປຄົ້ນຄວ້າ ແລະຜັນຂະຫຍາຍເປັນອັນລະອຽດເພື່ອເຊື່ອມສານເຂົ້າໃນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX ທີ່ຍັງ ເຫຼືອອີກ 2 ປີ ໃຫ້ໄດ້ຮັບ ໝາກຜົນ ແລະມີຜົນສໍາເລັດສູງສຸດ;

– ສະເໜີໃຫ້ ທ່ານ ຮອງນາຍົກລັດຖະມົນຕີ ຜູ້ຊີ້ນໍາຂົງເຂດເສດຖະກິດ ພິຈາລະນາມີທິດຊີ້ນໍາ ຕໍ່ແນວຄວາມຄິດກອງປະຊຸມໂຕະມົນປະຈໍາປີ 2024 ທີ່ທັງສອງກຸ່ມສົນທະນາ ໄດ້ປຶກສາຫາລື ແລະນໍາສະເໜີໃນກອງປະຊຸມຄັ້ງນີ້ ເພື່ອເປັນບ່ອນອີງໃນການສະເໜີຂໍອະນຸມັດຈາກ ລັດຖະບານ ໃນການຈັດກອງປະຊຸມໂຕະມົນ ປະຈໍາປີ 2024 ຢ່າງເປັນທາງການ.